




# ຄວາມລົ້ມເຫລວ







“ຫລາຍກວ່ານັ້ນອີກ ພວກເຮົາກໍມີຄວາມຊົມຊື່ນຍິນດີໃນຄວາມຍາກລຳ
ບາກດ້ວຍ ເພາະຮູ້ແລ້ວວ່າຄວາມຍາກລຳບາກນັ້ນເຮັດໃຫ້ເກີດຄວາມ
ອົດທົນ ແລະ ດ້ວຍຄວາມອົດທົນນັ້ນເຮັດໃຫ້ເຮົາເປັນຄົນທີ່ພຣະເຈົ້າຊົງ
ເຫັນຊອບ ແລະ ການທີ່ຊົງເຫັນຊອບນັ້ນເຮັດໃຫ້ມີຄວາມໄວ້ວາງໃຈ
ແລະ ຄວາມໄວ້ວາງໃຈ ບໍ່ທ່ອນເຮັດໃຫ້ມີຄວາມເສຍໃຈ ເພາະຜິດຫວັງ
ເພາະເຫັນວ່າພຣະເຈົ້າຊົງເປັນຄວາມຮັກຂອງພຣະອົງເຂົ້າໃຈໃນຂອງ
ພວກເຮົາໂດຍທາງພຣະວິນຍານບໍຣິສຸດເຈົ້າ ຊຶ່ງພຣະອົງໄດ້ປະທານໃຫ້
ແກ່ເຮົາທັງຫລາຍແລ້ວ”

(ໂຣມ 5:3–5,)





ພວກເຮົາອາໄສໃນໂລກທີ່ເຕັມໄປດ້ວຍຄວາມບາບ ແລະ ແລະ ຄວາມທຸກທໍລະມານ. ພວກເຮົາໄດ້ຜະເຊີນກັບຄວາມລົ້ມເຫລວຄືກັນ ຈົນໃນບາງເວລາເຮົາອາດຕັ້ງຄຳຖາມກ່ຽວກັບຄວາມຮັກຂອງພຣະເຈົ້າ.
ແລ້ວພວກເຮົາຈະຕອບສະໜອງກັບຄວາມລົ້ມເຫລວນີ້ໄດ້ແນວໃດ?

ພວກເຮົາຈະສຶກສາກ່ຽວກັບບາງຄົນໃນພຣະຄຳພີວ່າເພິ່ນໄດ້ຕອບຮັບກັບສະຖານະການທີ່ບໍ່ປາດຖະໜາຕ່າງໆໄດ້ແນວໃດ? ແລະ ຕົວຢ່າງຂອງພວກເຂົານັ້ນຊ່ວຍພວກເຮົາເວລາທີ່ຜະເຊີນກັບສະຖານະການທີ່ຄ້າຍໆກັນໄດ້ແນວໃດ

ພາຍຸທີ່ເກີດຂຶ້ນໃນຊີວິດ



ພະຍາດໂລຄາ



ໄພພິບັດ



ຄວາມຜິດຫວັງ



ການພົບກັບພຣະເຢຊູ





# ພາຍຸທີ່ເກີດຂຶ້ນໃນຊີວິດ

"ແລ້ວລົມພະຍຸກໍເລີ່ມພັດມາແຮງ ແລະຟອງນ້ຳຊັດເຂົ້າເຮືອຈົນເຮືອເກືອບຈະເຕັມດ້ວຍນ້ຳ" (Mark 4:37)



ການຂ້າມທະເລຄາລີເລໃນເວລາຕອນເດິກ ເຖິງວ່າຈະຢູ່ທ່າມກາງລົມພະຍຸກໍ່ຕາມ, ບໍ່ແມ່ນບາງສິ່ງທີ່ໃໝ່ສຳລັບເປໂຕ, ແອນດຣູ, ຢາໂກໂບ ແລະ ໂຢຮັນ, ຜູ້ທີ່ເປັນຊາວປະມົງຜູ້ຊ່ຽວຊານ.

ຢ່າງໃດກໍ່ຕາມພະຍຸນັ້ນໄດ້ກະໜ່ຳໃສ່ພວກເຂົາ. ລົມພັດຄື້ນຊັດຂຶ້ນມາໃນເຮືອ, ນ້ຳຖ້ວມເຮືອ ແລະ ເປັນອັນຕະລາຍເຖິງຊີວິດ. ຫລັງຈາກນັ້ນພວກເຂົາຄຳນຶງວ່າ... ພຣະເຢຊູຢູ່ໃສ? ພຣະອົງກຳລັງນອນຫລັບຢູ່ບໍ? ເປັນຫຍັງພຣະອົງຄືບໍ່ຊ່ວຍພວກເຮົາ? ພຣະອົງໄດ້ສົນໃຈກັບສິ່ງທີ່ກຳລັງເກີດຂຶ້ນຢູ່ໃນເຮືອບໍ? (ມລກ 4:35-38).



ໃນຊີວິດຂອງພວກເຮົາພວກເຮົາຕ້ອງຜະເຊີນກັບພະຍຸ. ພວກເຮົາຂໍໃຫ້ພຣະເຢຊູຊ່ວຍ, ແຕ່ບາງຄັ້ງເບິ່ງຄືພຣະອົງກຳລັງນອນຫລັບຢູ່. ພວກເຮົາບໍ່ໄດ້ສຳຜັດການມີຢູ່ຂອງພຣະອົງ, ແຕ່ວ່າພຣະອົງຊົງຢູ່ບ່ອນນັ້ນກັບພວກເຮົາ



ຈົ່ງລໍຖ້າຊ່ວງເວລາທີ່ພຣະອົງຈະຫ້າມລົມພະຍຸຂອງພວກເຮົາ: "ງຽບສະຫງົບແມ" (ມລກ 4:39). ພຣະອົງເປັນຫ່ວງພວກເຮົາ (1 ປຕ 5:7). ພຣະອົງສາມາດຢຸດລົມພະຍຸຂອງພວກເຮົາໄດ້ ແລະ ຢ່າລືມສັນລະເສີນພຣະອົງເມື່ອລົມພະຍຸເຊົາແລ້ວ (ມລກ 4:40-41).

# ພະຍາດໂລຄາ

“ຖ້າເຮົາໄດ້ບາຍພຽງແຕ່ເຄື່ອງນຸ່ງຂອງເພິ່ນເທົ່ານັ້ນ ເຮົາກໍຈະດີພະຍາດ”
(ມລກ 5:28)



ຍິງຄົນນັ້ນທົນທຸກທໍລະມານຈາກການເປັນເລືອດຕົກເປັນເວລາ 12 ປີ, ໂດຍບໍ່ມີແພດຄົນໃດທີ່ສາມາດຮັກສານາງໄດ້ເລີຍ (ມລກ 5:25-26). ໃນປະຈຸບັນ ຍັງມີປະເທດທີ່ບໍ່ມີລະບົບປະກັນສຸຂະພາບທີ່ຮັກສາຟຣີ ແລະ ເລື່ອງລາວແບບນີ້ຍັງຄົງເກີດຂຶ້ນເປັນຄວາມຈິງຢູ່



ໃນບາງກໍລະນີ້, ພວກເຮົາອາດຈະຜະເຊີນກັບສະຖານະການຄວາມເຈັບປ່ວຍທີ່ບີບຄັ້ນ ແລະ ສ້າງຄວາມທໍລະມານໃຫ້ກັບພວກເຮົາໂດຍຊອກບໍ່ພົບທາງອອກໄດ້.

ແຕ່ຜູ້ຍິງຄົນນັ້ນກັບໄດ້ເຫັນທາງອອກໃນພຣະເຢຊູ ແລະ ໂດຍຄວາມເຊື່ອຂອງນາງເຮັດໃຫ້ພຣະອົງຊ່ວຍນາງ (ມລກ 5:27-29).



ພວກເຮົາຕ້ອງວາງໃຈໃນພຣະເຢຊູ ໃຫ້ພຣະອົງເປັນແພດຜູ້ຮັກສາພວກເຮົາ, ຫລື ເຮັດການອັດສະຈັນໂດຍກົງໃນໂຕຂອງພວກເຮົາໄດ້.



ໃນບາງກໍລະນີ, ພຣະອົງຊົງເຊີນໃຫ້ພວກເຮົາວາງພາລະ ແລະ ຄວາມກັງວົນທັງໝົດໄວ້ກັບພຣະອົງ (ມທ 11:28-30).

# ໄພພິບັດ

"ແມ່ນວ່າເນື້ອກາຍຂອງຂ້ອຍຈະຖືກພະຍາດກັດກິນ ເມື່ອຍັງຢູ່ໃນຮ່າງກາຍ ຂ້ອຍຈະໄດ້ເຫັນພຣະເຈົ້າ." (ໂຢບ 19:26)

ສົງຄາມ, ຄວາມຮຸນແຮງ ແລະ ໄພພິບັດທາງທຳມະຊາດໄດ້ປຸ້ນຊີວິດຂອງໂຢບຢ່າງສິ້ນເຊີງ (ໂຢບ 1:13-19). ພວກເຮົາທຸກຄົນຕ່າງກໍ່ຜະເຊີນກັບໄພພິບັດ ບໍ່ວ່າທາງທຳມະຊາດຫລືເກີດຈາກຄວາມຊົ່ວຮ້າຍທີ່ແຜ່ຫລາຍໃນໂລກນີ້

ພວກເຮົາຈະຮັບມືແນວໃດ? ໂຢບຮັບມືແນວໃດ?





- ລາວບໍ່ຕຳໜິພຣະເຈົ້າ ແລະ ບໍ່ສັນລະເສີນພຣະອົງ
- ຍຶດໝັ້ນໃນພຣະເຈົ້າດ້ວຍສຸດກຳລັງ
- ວາງໃຈແມ້ໃນຊ່ວງທີ່ມືດມິດທີ່ສຸດ
- ຕັ້ງເປົ້າໝາຍສຳລັບອະນາຄົດອັນຮຸ່ງເຮືອງ (ໂຢບ 19:25-27)

ຖ້າວ່າພວກເຮົາບໍ່ທໍ້ແທ້, ພວກເຮົາຈະເຫັນວ່າເຖິງໃນຍາມລຳບາກທີ່ສຸດ ພຣະເຈົ້າກໍ່ຢູ່ກັບພວກເຮົາສະເໝີ. ພຣະອົງຊົງຮັກພວກເຮົາ ແລະ ຊົງເສີມກຳລັງພວກເຮົາຈາກຄວາມອ່ອນແອ, ໃຫ້ມີຄວາມກ້າຫານ ແທນທີ່ຄວາມທໍ້ແທ້ ແລະ ມີຄວາມຫວັງເມື່ອພົບກັບໄພພິບັດ
(ໂຢເອນ 3:10; ໂຣມ 5:3-5).

ຖ້າວ່າພວກເຮົາກຳລັງຜະເຊີນກັບຊ່ວງເວລາທີ່ລຳບາກ, ຈົ່ງພິຈາລະນາເຖິງຄວາມຈິງທີ່ວ່າ ຄວາມຮັກ ແລະ ການເບິ່ງແຍງຂອງພຣະເຈົ້າທີ່ມີຕໍ່ທ່ານນັ້ນ ເປັນສິ່ງທີ່ປອດໄພ ແລະ ໝັ້ນຄົງທີ່ສຸດໃນຊີວິດ.

# ຄວາມຜິດຫວັງ

"ພວກເຮົາເຄີຍຫວັງວ່າ ແມ່ນເພິ່ນຜູ້ນີ້ແຫລະທີ່ຈະເປັນຜູ້ປົດປ່ອຍຊາດອິດສະຣາເອນໃຫ້ເປັນອິດສະຫລະ" (ລກ 24:21ກ)





ມຸມມອງ: ພຣະເຢຊູແມ່ນພຣະເມຊີອາຜູ້ທີ່ຈະໄຖ່ບາບອິດສະຣາເອນ.

ຄວາມເປັນຈິງ: ພຣະອົງຊົງສິ້ນພຣະຊົນ (ລກ 24:18-21). ຄວາມຜິດຫວັງຂອງພວກເຂົານັ້ນຫລາຍຈົນເຮັດໃຫ້ພວກເຂົາບໍ່ສາມາຍອມຮັບແມ້ແຕ່ຫລັກຖານທີ່ຊັດເຈນທີ່ສຸດກ່ຽວກັບການຟື້ນຄືນພຣະຊົນຂອງພຣະເຢຊູ (ລກ 24:22-24).

ພຣະເຢຊູຊົງຊ່ວຍໃຫ້ພວກເຂົາກັບມີຄວາມອົດທົນໃນຄວາມຫວັງອີກຄັ້ງ. ໃນທີ່ສຸດ, "ຕາຂອງພວກເພິ່ນຖືກເປີດໃຫ້ສະຫວ່າງ" (ລກ 24:31) , ແລະ ພວກເຂົາໄດ້ແລ່ນໄປບອກໝູນໃຈຜູ້ທີ່ກຳລັງຄົງຜິດຫວັງຢູ່ (ລກ 24:32–35; 2 ກຣທ 1:4). ພວກເຮົາໄດ້ຮຽນຮູ້ຫຍັງຈາກປະສົບການຂອງພວກເຂົາ?







- ຕ້ອງບໍ່ປ່ອຍໃຫ້ຄວາມສົງໄສຝັງຮາກລົງໃນຈິດໃຈຂອງພວກເຮົາ
- ພຣະອົງຍ່າງຄຽງຂ້າງພວກເຮົາໃນເວລາທີ່ຜິດຫວັງ
- ພຣະອົງຈະມາຍຂໍ້ສົງໄສອອກ, ຖ້າເຮົາໃຫ້ພຣະອົງເປັນຜູ້ປອບໂຍນ
- ພຣະເຢຊູຊົງຮູ້ດີກວ່າພວກເຮົາ ວ່າຄວາມຈິງເປັນແນວໃດ?

# ການພົບກັບພຣະເຢຊູ

“ເຮົາເຫັນວ່າຄວາມທຸກລຳບາກຂອງພວກເຮົາໃນເວລາປະຈຸບັນນີ້ ບໍ່ອາດທຽບໃສ່ກັບສະຫງ່າຣາສີທີ່ຈະຖືກເປີດເຜີຍແກ່ພວກເຮົາໃນພາຍພາກໜ້າໄດ້.” (ໂຣມ 8:18)

ຕອນທີ່ ທ່ານ ນາງ ເອເລັນ ຈີ ໄວທ໌ ຕົກຢູ່ໃນຄວາມສິ້ນຫວັງທີ່ສຸດ, ເພິ່ນໄດ້ເຫັນນິມິດຂອງພຣະເຢຊູ

ເພິ່ນໄດ້ເຂົ້າໃຈວ່າພຣະອົງເຂົ້າໃຈທຸກສິ່ງທີ່ເພິ່ນໄດ້ກຳລັງຜະເຊີນຢູ່. ໃນຊ່ວງເວລາໜຶ່ງ ພຣະເຢຊູໄດ້ຊົງວາງພຣະຫັດຂອງພຣະອົງລົງທີ່ຫົວຂອງ ທ່ານ ນາງ ເອເລັນ ຈີ ໄວທ໌ ແລະ ກ່າວວ່າ “ຢ່າຢ້ານເລີຍ”

ເພິ່ນໄດ້ເຫັນພາບອັນງົດງາມ, ແລະເບິ່ງຄືວ່າເພິ່ນໄດ້ຮັບຄວາມປອດໄພ ແລະ ສັນຕິສຸກແຫ່ງສະຫວັນແລ້ວ.

ນິມິດນີ້ໄດ້ເຮັດໃຫ້ເພິ່ນໄດ້ມີຄວາມຫວັງ ແລະ ມີຄວາມສັດທາ, ມີຄວາມໝັ້ນໃຈວ່າເພິ່ນນັ້ນສາມາດໄວ້ວາງໃຈໃນພຣະເຈົ້າໄດ້



“ພວກເຮົາຮູ້ແລ້ວວ່າ ພຣະເຈົ້າຊົງ ຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນ ທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ ຕາມພຣະປະສົງຂອງພຣະອົງ” (ໂຣມ 8:28)

“ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເລື່ອງຄວາມປາຖະໜາທຸກຢ່າງ ຂອງພວກເຈົ້າ ຕໍ່ພຣະເຈົ້າດ້ວຍການພາວັນນາອະທິຖານ ດ້ວຍການ ອ້ອນວອນທູນຂໍ ແລະ ດ້ວຍຈິດໃຈໂມທະນາຂອບພຣະຄຸນ, ແລ້ວສັນຕິສຸກ ອັນມາແຕ່ພຣະເຈົ້າ ຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈ ແລະ ຄວາມຄິດຂອງເຈົ້າທັງຫລາຍ ໄວ້ໃນພຣະຄຣິດເຈົ້າເຢຊູ” (ຟລປ 4:6-7)

“ພີ່ນ້ອງທັງຫລາຍຂອງເຮົາເອີຍ, ເມື່ອພວກເຈົ້າພົບການທົດ ລອງຕ່າງໆ ຈົ່ງຖືວ່າເປັນເລື່ອງທີ່ໜ້າຍິນດີທີ່ສຸດ ເພາະພວກ ເຈົ້າຮູ້ຢູ່ວ່າ ເມື່ອຄວາມເຊື່ອຂອງພວກເຈົ້າທົນຕໍ່ການຖືກທົດ ລອງໄດ້ ກໍເຮັດໃຫ້ເກີດມີຄວາມໝັ້ນໃຈ. ຈົ່ງໃຫ້ຄວາມໝັ້ນໃຈ ຂອງພວກເຈົ້ານັ້ນ ຍືນຍົງຕະຫລອດໄປ ເພື່ອວ່າພວກເຈົ້າຈະ ໄດ້ເປັນຄົນສຳເລັດ ແລະ ຄົບຖ້ວນ ໂດຍບໍ່ຂາດເຂີນສິ່ງໃດ” (ຢກບ 1:2-4, 12)



“ແຕ່ຄຳຕອບຂອງພຣະອົງເປັນດັ່ງນີ້: ພຣະຄຸນຂອງເຮົາກໍມີພໍແລ້ວສຳລັບເຈົ້າ, ດ້ວຍວ່າ ເມື່ອໃດທີ່ເຈົ້າອ່ອນແຮງ ເມື່ອນັ້ນຣິດອຳນາດຂອງເຮົາກໍສຳແດງອອກຢ່າງລົ້ນເຫລືອກ.” (2 ກຣທ 12:9)

“ໃນປະສົບການຊີວິດຂອງມະນຸດທຸກຄົນ ຍ່ອມມີບາງຊ່ວງເວລາທີ່ຕ້ອງປະເຊີນກັບຄວາມຜິດຫວັງຢ່າງຮ້າຍແຮງ ແລະ ຄວາມທໍ້ແທ້ໃຈຢ່າງສຸດຂີດ—ຄືວັນເວລາທີ່ມີຄວາມໂສກເສົ້າເປັນສ່ວນແບ່ງໃນຊີວິດ, ແລະ ເປັນເລື່ອງຍາກຍິ່ງທີ່ຈະເຊື່ອວ່າ ພຣະເຈົ້າຊົງຍັງເປັນພຣະຜູ້ໂຜດປະທານພຣະເມດຕາກະລຸນາແກ່ມວນມະນຸດຜູ້ເປັນບຸດແຫ່ງແຜ່ນດິນໂລກ ຂອງພຣະອົງ; ເປັນວັນເວລາທີ່ຄວາມທຸກຍາກລໍາບາກລົບກວນແລະຂົ່ມເຫັງຈິດວິນຍານ, ຈົນກາຍເປັນວ່າຄວາມຕາຍນັ້ນໜ້າປາດຖະໜາກວ່າການມີຊີວິດຢູ່. ໃນຊ່ວງເວລາເຊັ່ນນັ້ນເອງ ທີ່ຫຼາຍຄົນໄດ້ສູນເສຍການຍຶດໝັ້ນໃນພຣະເຈົ້າ ແລະ ຖືກນໍາພາເຂົ້າສູ່ການເປັນທາດຂອງຄວາມສົງໄສ, ຕິດຢູ່ໃນພັນທະນາການແຫ່ງຄວາມບໍ່ເຊື່ອ. ຖ້າຫາກໃນເວລາເຊັ່ນນັ້ນ ເຮົາສາມາດສັງເກດເຫັນດ້ວຍສາຍຕາຝ່າຍວິນຍານ ເຖິງຄວາມໝາຍແຫ່ງພຣະກະລຸນາອັນແສນລໍ້າເລີດຂອງພຣະເຈົ້າ, ເຮົາກໍຈະໄດ້ເຫັນເຫຼົ່າທູດສະຫວັນທີ່ກໍາລັງສະແຫວງຫາເພື່ອຈະຊ່ວຍກູ້ເຮົາໃຫ້ພົ້ນຈາກຕົວເຮົາເອງ, ແລະ ຊົງພະຍາຍາມຢ່າງຍິ່ງທີ່ຈະຕັ້ງຕີນຂອງພວກເຮົາໄວ້ເທິງຮາກຖານອັນໝັ້ນຄົງຍິ່ງກວ່າພູເຂົາທີ່ສະຖິດຢູ່ຊົ່ວກະລະນານ, ແລ້ວຄວາມເຊື່ອໃໝ່ ແລະ ຊີວິດ. ໃໝ່ ກໍຈະເບັ່ງບານຂຶ້ນມາ.”

**EGW (Prophets and Kings, pg. 163)**